LAO PEOPLE’S DEMOCRATIC REPUBLIC

PEACE INDEPENDENCE DEMOCRACY UNITY PROSPERITY

**Ministry of Public Works and Transport (MPWT)**

**The Department of Road (DoR) and**

**The Public Works and Transport Research Institute (PTRI)**

# ບົດສະຫຼຸບຫຍໍ້ແຜນສົ່ງເສີມການມີສ່ວນຮ່ວມຂອງຊົນເຜົ່າ

# Ethnic Groups Engagement Plan (EGEP)

## Climate Resilience Improvement of National Road 13 South Project

## (Section 3)

**Prepared By :**

Environmental Research and Disaster Protection Division (EDPD)

Public Works and Transport Research Institute (PTRI)

**Vientiane, September 2020**

# ບົດສະຫຼຸບຫຍໍ້

## ຄວາມເປັນມາ

ລັດຖະບານແຫ່ງ ສປປ ລາວ ໄດ້ກະກຽມແຜນສົ່ງເສີມການມີສ່ວນຮ່ວມຂອງຊົນເຜົ່າ (EGEP) ສໍາລັບໂຄງການປັບປຸງ ແລະ ສ້ອມແປງ ທາງຫຼວງແຫ່ງຊາດເລກທີ 13 ໃຕ້ (NR-13S) ໃນເສັ້ນທາງຊ່ວງທີ 3, ເພື່ອແກ້ໄຂຜົນກະທົບຂອງໂຄງການຕໍ່ປະຊົນບັນດາເຜົ່າທີ່ຢູ່ລຽບຕາມແຄມທາງໃນຂອບເຂດ ພື້ນທີ່ໂຄງການ.

ລັດຖະບານລາວໂດຍຜ່ານກະຊວງໂຍທາທິການ ແລະ ຂົນສົ່ງ (ກະຊວງ ຍທຂ) ແລະ ໂດຍການຊ່ວຍເຫຼືອທຶນຈາກ ທະນາຄານໂລກ (WB), ທະນາຄານລົງທຶນເອີຣົບ (EIB) ແລະ ທະນາຄານລົງທຶນພື້ນຖານໂຄງລ່າງອາຊີ (AIIB). ກໍາລັງວາງແຜນຈັດຕັ້ງປະຕິບັດໂຄງການປັບປຸງ ແລະ ສ້ອມແປງ ເສັ້ນທາງ NR-13S ຕັ້ງແຕ່ກິໂລແມັດ (ກມ) 71 ເຖິງກິໂລແມັດ 346. ໂຄງການດັ່ງກ່າວຈະແບ່ງອອກເປັນ 4 ສັນຍາ (ຫລື 4 ຊ່ວງ) ດ້ວຍການສະໜອງທຶນ ໂດຍ WB, EIB ແລະ AIIB ໃນຂະນະທີ່ກອງທຶນບູລະນະຮັກສາເສັ້ນທາງ (RMF) ຂອງລັດຖະບານລາວ ຈະສະໜອງເງິນທຶນສົມທົບຈໍານວນໜຶ່ງ. ປະຈຸບັນນີ້ AIIB ກໍາລັງພິຈາລະນາການສະໜອງທຶນສໍາລັບ ຊ່ວງທີ 3 ຈາກ ກມ 190 ເຖິງ ກມ 268 (ເອີ້ນໃນເອກະສານສະບັບນີ້ວ່າ ໂຄງການປັບປຸງເສັ້ນທາງ ຫລື ການສະເໜີໂຄງການ).

ໂຄງການດັ່ງກ່າວເປັນໂຄງການບ້ວງເງິນເພີ່ມ ຂອງໂຄງການ ຂະແໜງຂົວທາງ ໄລຍະທີ 2 (LRSP2-AF), ສະນັ້ນເພື່ອຫລີກລ້ຽງ ແລະ ຫຼຸດຜ່ອນຜົນກະທົບທາງລົບທີ່ອາດຈະເກີດຂຶ້ນ ໃນໄລຍະດໍາເນີນການກໍ່ສ້າງ ແລະ ບໍາລຸງຮັກສາ ກະຊວງ ຍທຂ ຈຶ່ງໄດ້ຮ່າງກອບວຽກການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMF), ກອບວຽກສົ່ງເສີມການເຂົ້າຮ່ວມຂອງກຸ່ມຊົນເຜົ່າ (EGEF) ແລະ ກອບນະໂຍບາຍການຈັດສັນຍົກຍ້າຍ (RPF) ແລະ ອະນຸມັດໂດຍ WB, ກອບນະໂຍບາຍດັ່ງກ່າວໄດ້ຖືກເປີດເຜີຍຕໍ່ສາທາລະນະ. ສໍາລັບຊ່ວງໄລຍະ 3 ທີ່ຈະໄດ້ຮັບການສະໜັບສະໜູນຈາກ AIIB, ແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMP), ແຜນການຍົກຍ້າຍຈັດສັນ (RP) ແລະ ແຜນການມີສ່ວນຮ່ວມຂອງຊົນເຜົ່າ (EGEP) ແມ່ນໄດ້ກະກຽມເພື່ອໃຫ້ສອດຄ່ອງກັບນະໂຍບາຍສິ່ງແວດລ້ອມ ແລະ ສັງຄົມຂອງ AIIB (ESP).

ໜ້າວຽກຂອງໂຄງການປັງປຸງ ແລະ ສ້ອມແປງ ທາງ 13 ໃຕ້ ປະກອບມີການປູໜ້າທາງດ້ວຍຢາງຂົ້ວ (Asphalt Concrete) ໃນສອງເລນຂອງເສັ້ນທາງປັດຈຸບັນ ແລະ ການປັບປຸງເສັ້ນທາງໃຫ້ມີຄວາມທົນທານກັບສະພາບອາກາດໃນພື້ນທີ່ທີ່ມີຄວາມສ່ຽງເຊັ່ນ: ການກໍ່ສ້າງ ແລະ ຂະຫຍາຍທໍ່ລະບາຍນໍ້າເພີ່ມເຕີມ ໃຫ້ມີທາງນໍ້າເຂົ້າ ແລະ ອອກທີ່ເໝາະສົມ, ຮອງຂ້າງທາງ ແລະ ຄອງເພື່ອລະບາຍນໍ້າທີ່ໄຫຼອອກ ແລະ ການປ້ອງກັນຂອບທາງ. ການອອກແບບ ແລະ ປັບປຸງເພື່ອຮັບປະກັນວ່ານໍ້າທີ່ມາຈາກພະຍຸ (ນໍ້າຝົນ) ສາມາດໄຫຼເຂົ້າສູ່ສາຍນໍ້າທໍາມະຊາດ, ຫຼຸດຜ່ອນຜົນກະທົບຕໍ່ເສັ້ນທາງ ແລະ ບໍລິເວນຂ້າງທາງ.

EGEP ຂອງໂຄງການປັບປຸງ ແລະ ສ້ອມແປງເສັ້ນທາງ NR-13S ໃນຊ່ວງທີ 3 ຈາກ ກມ 190 ເຖິງ ກມ 268, ເຊິ່ງຈະໄດ້ຮັບການສະໜັບສະໜູນໂດຍ AIIB.

## ຈຸດປະສົງຂອງແຜນ EGEP

ຈຸດປະສົງຂອງ EGEP: ເພື່ອອອກແບບ ແລະ ຈັດຕັ້ງປະຕິບັດໂຄງການໃນແບບທີ່ສົ່ງເສີມ ເຄົາລົບຢ່າງເຕັມທີ່ຕໍ່ເອກະລັກ, ກຽດສັກສີ, ສິດທິມະນຸດ, ເສດຖະກິດ ແລະ ວັດທະນະທຳຂອງປະຊາຊົນບັນດາເຜົ່າ, ໂດຍທີ່ໄດ້ກຳນົດດ້ວຍຕົວພວກເຂົາເອງ, ເພື່ອໃຫ້ພວກເຂົາ: (ກ) ໄດ້ຮັບຜົນປະໂຫຍດທາງສັງຄົມວັດທະນາທຳ ແລະ ເສດຖະກິດ ທີ່ເໝາະສົມ; (ຂ) ບໍ່ໄດ້ຮັບຜົນກະທົບທາງລົບທີ່ຮ້າຍແຮງອັນເປັນຜົນມາຈາກໂຄງການ; ແລະ (ຄ) ສາມາດເຂົ້າຮ່ວມຢ່າງຫ້າວຫັນ ໃນໂຄງການທີ່ມີຜົນກະທົບຕໍ່ພວກເຂົາ.

ເພື່ອຈຸດປະສົງນີ້, ການປະເມີນຜົນທາງສັງຄົມໄດ້ ດຳເນີນການປຶກສາຫາລືໂດຍຄວາມສະມັກໃຈ, ກ່ອນ ແລະ ໄດ້ປຶກສາຫາລືກັບສະມາຊິກກຸ່ມຊົນເຜົ່າທີ່ໄດ້ຮັບຜົນກະທົບ. ຜົນໄດ້ຮັບຈາກການປະເມີນຜົນທາງສັງຄົມ ແລະ ຂັ້ນຕອນການປຶກສາຫາລືແບບສະມັກໃຈ, ກ່ອນ ແລະ ການໃຫ້ຂໍ້ມູນ ໄດ້ຖືກນຳໃຊ້ເພື່ອກະກຽມບົດລາຍງານ EGEP ເບື້ອງຕົ້ນ ສຳລັບຊົນເຜົ່າທີ່ໄດ້ຮັບຜົນກະທົບໃນເຂດຂອງໂຄງການ.

## ກຸ່ມຊົນເຜົ່າໃນເຂດໂຄງການ

ໂດຍທົ່ວໄປແລ້ວເຫັນວ່າ ກຸ່ມຊົນເຜົ່າລາວ - ໄຕ ແມ່ນກຸ່ມທີ່ມີຫຼາຍກວ່າໝູ່ໃນເຂດຂອງໂຄງການ, ກວມເອົາ 90% ຂອງພົນລະເມືອງ. ກຸ່ມຍ່ອຍ ອື່ນໆ ເຊິ່ງທີ່ມີຢູ່ໃນພື້ນທີ່ໂຄງການລວມມີ ລາວລຸ່ມ, ລື້, ຜູ້ໄທ, ໄຕ, ໂດຍມີຊົນເຜົ່າລາວລຸ່ມ ເປັນຊົນເຜົ່າທີ່ມີຫລາຍທີ່ສຸດໃນຂົງເຂດໂຄງການ. ມີການປະເມີນວ່າ 10 ບ້ານໃນສອງເມືອງຂອງສອງແຂວງ (9 ບ້ານ ໃນເມືອງປາກກະດິງ, ແຂວງບໍລິຄຳໄຊ ແລະ 1 ບ້ານໃນເມືອງຫີນບູນ, ແຂວງຄຳມວນ) ຈະໄດ້ຮັບຜົນກະທົບຈາກໂຄງການໃນຫລາຍຮູບແບບ, ໃນນີ້ມີພຽງ 2 ບ້ານເທົ່ານັ້ນທີ່ໄດ້ຮັບຜົນກະທົບຕໍ່ກຸ່ມຊົນເຜົ່າ. ຊົນເຜົ່າເຫລົ່ານີ້ ຈະໄດ້ຮັບຜົນກະທົບໂດຍກົງຈາກໂຄງການ ເຊັ່ນ ບ້ານ ທົ່ງນາມີ ແລະ ບ້ານ ນ້ຳເດື່ອ.

## ຜົນກະທົບຂອງໂຄງການທີ່ມີທ່າແຮງຕໍ່ຊົນເຜົ່າ

ໜ້າວຽກໂຄງການສຳລັບຊ່ວງທີ 3 ແຕ່ ກມ 190 ເຖິງ ກມ 268 ອາດຈະມີຜົນກະທົບຕໍ່ຊົນເຜົ່າ (EG) ເຊັ່ນ: ເຜົ່າຂະມຸ ແລະ ມົ້ງ. ໂຄງການຄາດວ່າຈະມີຜົນກະທົບໃນທາງບວກໂດຍລວມຕໍ່ປະຊາຊົນຈາກຊົນເຜົ່າ. ເຖິງຢ່າງໃດກໍ່ຕາມ, ບາງຜົນກະທົບດ້ານລົບທີ່ອາດມີຕໍ່ຊົນເຜົ່າກໍ່ອາດມີ. ຜົນກະທົບທີ່ຄາດວ່າຈະເກີດຂຶ້ນ ແມ່ນສ່ວນໃຫຍ່ຈະຢູ່ ພາຍໃຕ້ຂອບເຂດແລວທາງມີຢູ່ແລ້ວ (ຢູ່ທີ່ 20 ແມັດ ຫຼື 10 ແມັດຈາກຈຸດໃຈກາງຂອງເສັ້ນທາງແຫ່ງຊາດ) ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຖະໜົນແຫ່ງຊາດ, ປີ 2016. ແຕ່ຍັງຈະຕ້ອງການ ການປ່ຽນແທນສຳລັບທີ່ດິນຂອງເອກະຊົນ ແລະ ທີ່ດິນຂອງລັດຖະບານ.

ອີງຕາມການຈັດວາງການອອກແບບເບື້ອງຕົ້ນໃນປະຈຸບັນ, ຈຳນວນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ (PAP) ແລະ ຄົວເຮືອນທີ່ໄດ້ຮັບຜົນກະທົບຈາກໂຄງການແມ່ນປະມານ 177 ຄອບຄົວເຊິ່ງປະກອບດ້ວຍ 154 ຄອບຄົວ ທີ່ເປັນຄອບຄົວລາວລຸ່ມ, 1 ຄບຄົວທີ່ເປັນຄອບຄົວຊົນເຜົ່າຂະມຸ ແລະ 22 ຄອບຄົວທີ່ເປັນຄອບຄົວຊົນເຜົ່າມົ້ງ. ຜົນກະທົບຂອງຄອບຄົວຊົນເຜົ່າຂະມຸ ແລະ ຄອບຄົວເຜົ່າມົ້ງ ສ່ວນໃຫຍ່ແມ່ນຢູ່ໃນກິດຈະກຳການດຳລົງຊີວິດຂອງເຂົາເຈົ້າ.

ປະເພດຜົນກະທົບທົ່ວໄປໄດ້ຖືກສະຫລຸບໃນຈຸດຈໍ້າຂ້າງລຸ່ມນີ້: (i) ການເພີ່ມຂຶ້ນຂອງອຸປະຕິເຫດຕາມທ້ອງຖະໜົນແກ່ຄົນ ແລະ ສັດ; (ii) ສູນເສຍຊັບສິນ (ທີ່ດິນ ແລະ ພືດຜົນ); (iii) ອັນຕະລາຍຕໍ່ສຸຂະພາບເຊັ່ນ: (ກ) ມົນລະພິດທາງຂີ້ຝຸ່ນ ແລະ ສຽງ; (ຂ) ທ່າແຮງທີ່ຈະເພີ່ມຂຶ້ນຂອງພະຍາດຂອງຄົນ ແລະ ສັດ (ຄ) ຄວາມເປັນໄປໄດ້ທີ່ຈະໄດ້ຮັບອັນຕະລາຍຈາກການເກັບຮັກສາວັດສະດຸກໍ່ສ້າງ ແລະ ສະຖານທີ່ກໍ່ສ້າງ; (d) ສຸຂາພິບານ ແລະ ສຸຂະອະນາໄມບໍ່ດີຈາກການກຳຈັດສິ່ງເສດເຫຼືອທີ່ບໍ່ດີ ເຊິ່ງຈະກ່ຽວຂ້ອງກັບສຸຂະພາບ; (iv) ບັນຫາສັງຄົມ.

### ມາດຕະການຫຼຸດຜ່ອນຜົນກະທົບຕໍ່ຊົນເຜົ່າ

ໄດ້ມີຄວາມພະຍາຍາມເພື່ອຫຼຸດຜ່ອນຜົນກະທົບຈາກການ ຈັດສັນຍົກຍ້າຍໂດຍການວິເຄາະທາງເລືອກໃນການອອກແບບ ເພື່ອຫຼຸດຜ່ອນຄວາມກວ້າງຂອງຂອບເຂດແລ້ວທາງທີ່ຈະສົ່ງຜົນກະທົບ (COI). ເພື່ອປະຕິບັດຄວາມຮຽກຮ້ອງຕ້ອງການຂອງ ESS 3, ວຽກງານດັ່ງຕໍ່ໄປນີ້ໄດ້ຖືກປະຕິບັດເປັນສ່ວນໜຶ່ງ ຂອງການກະກຽມແຜນ EGEP: (i) ການປະເມີນຜົນທາງສັງຄົມ; (ii) ຂັ້ນຕອນການປຶກສາຫາລືແບບລົງເລິກກັບຜູ້ຕາງໜ້າຂອງກຸ່ມຊົນເຜົ່າ; (iii) ຂັ້ນຕອນການປຶກສາຫາລືແບບອິດສະລະ, ກ່ອນ ແລະ ການໃຫ້ຂໍ້ມູນ; (iv) ແຜນປະຕິບັດງານຂອງແຜນ EGEP, ເຊິ່ງໄດ້ກະກຽມໂດຍອີງໃສ່ສາມຂະບວນການທຳອິດ.

### ແຜນປະຕິບັດງານທີ່ສະເໜີສຳລັບແຜນ EGEP

ການປະຕິບັດຕໍ່ໄປນີ້ແມ່ນລວມຢູ່ໃນ EGEP:

- ສ້າງກົນໄກແກ້ໄຂຂໍ້ຮ້ອງທຸກຂອງໂຄງການ (GRM) ໂດຍການເຂົ້າຮ່ວມຈາກ EGs.
- ການແຕ່ງຕັ້ງຜູ້ທີ່ປະສານງານ EGEP ທັງໃນ PTRI ແລະ ທີ່ປຶກສາດ້ານການຕິດຕາມການກໍ່ສ້າງ.
- ສືບຕໍ່ປຶກສາຫາລືກັບຊົນເຜົ່າໃນໄລຍະການກໍ່ສ້າງ ແລະ ການດຳເນີນງານ ແລະ ການບຳລຸງຮັກສາ (O&M) ຂອງໂຄງການ ລວມທັງການປຶກສາຫາລືແບບສະໝັກໃຈ, ກ່ອນ ແລະ ການໄດ້ຮັບຂໍ້ມູນ (FPIC) ເປັນປະຈຳ;
- ການມີສ່ວນຮ່ວມຂອງຊົນເຜົ່າໃນການຕິດຕາມການຈັດຕັ້ງປະຕິບັດ EGEP ແລະ ESMP ແລະ RP.

## ກອບກົດໝາຍ ແລະ ນະໂຍບາຍ

EGEP ສຳລັບການປັບປຸງເສັ້ນທາງ NR13S ນີ້ແມ່ນສອດຄ່ອງກັບນະໂຍບາຍ ESS3 ຂອງ AIIB ກ່ຽວກັບຄົນພື້ນເມືອງ, ບາງຂໍ້ກຳນົດຂອງດຳລັດ 84 ຂອງລັດຖະບານລາວ ແລະ ດຳລັດວ່າດ້ວຍ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (2019) ໃນການພິຈາລະນາທາງດ້ານກົດໝາຍລະດັບຊາດທີ່ກ່ຽວຂ້ອງ ລວມທັງນະໂຍບາຍກຸ່ມຊົນເຜົ່າ (1992), ລັດຖະທຳມະນູນຂອງປະເທດ (1995), ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (2015), ກົດໝາຍວ່າດ້ວຍທີ່ດິນ (2019) ແລະ ຄຳແນະນຳແຫ່ງຊາດວ່າດ້ວຍ ການປຶກສາຫາລືກັບບັນດາຊົນເຜົ່າ. ບົດແນະນຳດັ່ງກ່າວໄດ້ສະເໜີຫຼັກການ ແລະ ຂັ້ນຕອນຕ່າງໆ ເພື່ອດຳເນີນການປຶກສາຫາລື ທີ່ມີຄວາມໝາຍ ແລະ ໄດ້ຮັບການຍິນຍອມເຫັນດີ (FPIC) ໂດຍອິດສະຫຼະ ຂອງບັນດາຊົນເຜົ່າທັງໝົດ ທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາໃນລັກສະນະທີ່ລະອຽດອ່ອນທາງດ້ານວັດທະນະທຳ. ບົດແນະນຳ ປະກອບມີ: ກ) ຈຸດປະສົງ ແລະ ຂອບເຂດ, ຂ) ຂັ້ນຕອນການປຶກສາຫາລືກັບຊົນເຜົ່າ ໃນແຕ່ລະໄລຍະຂອງໂຄງການພັດທະນາ, ຄ) ວິທີການປຶກສາຫາລື ແລະ ວິທີການ ສຳລັບຊົນເຜົ່າທີ່ແຕກຕ່າງກັນໃນລັກສະນະທີ່ລະອຽດອ່ອນທາງດ້ານວັດທະນະທຳ, ງ) ຄາດຄະເນຜົນໄດ້ຮັບຂອງການປຶກສາຫາລືໃນແຕ່ລະຂັ້ນຕອນ ແລະ ຈ) ການຈັດຕັ້ງປະຕິບັດ ແລະ ຄວາມຮັບຜິດຊອບ.

## ຂັ້ນຕອນການຈັດຕັ້ງປະຕິບັດ

ກະຊວງ ຍທຂ ແມ່ນອົງການຈັດຕັ້ງປະຕິບັດທີ່ມີການຄຸ້ມຄອງ ແລະ ການປະສານງານໂດຍລວມຂອງພະແນກແຜນການ ແລະ ການຮ່ວມມື (DPC). ຫຼັກການ ແລະ ຂັ້ນຕອນທົ່ວໄປ ຈະຖືກນຳໃຊ້ໃນລະຫວ່າງການຈັດຕັ້ງປະຕິບັດໂຄງການຖ້າມີການລາຍງານວ່າໂຄງການ ທີ່ກ່ຽວຂ້ອງກັບກຸ່ມຊົນເຜົ່າໃນໂຄງການຍ່ອຍໃດໜຶ່ງ ເຊິ່ງຂັ້ນຕອນດັ່ງຕໍ່ໄປນີ້ຈະໄດ້ປະຕິບັດຄື: (i) ການກວດກາປະຊາຊົນບັນດາເຜົ່າໃນກຸ່ມປະຊາກອນທີ່ໄດ້ຮັບຜົນປະໂຫຍດ; (ii) ຫຼັກການ ແລະ ຂັ້ນຕອນທີ່ນຳໃຊ້ໃນໂຄງການຍ່ອຍທີ່ກ່ຽວຂ້ອງກັບຊົນເຜົ່າ; (iii) ການລາຍງານ, ການກວດກາ ແລະ ການເຮັດເປັນເອກະສານ.

## ກົນໄກແກ້ໄຂຂໍ້ຮ້ອງທຸກ

ພາລະບົດບາດ ແລະ ຄວາມຮັບຜິດຊອບທີ່ໄດ້ກຳນົດສຳລັບຄະນະກຳມະການແກ້ໄຂການຮ້ອງທຸກ ປະກອບມີ:

- ການປະສານງານກັບ ກະຊວງ ຍທຂ, ອຳນາດການປົກຄອງບ້ານ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອສ້າງຈິດສຳນຶກໃຫ້ກັບ ຜູ້ທີ່ໄດ້ຮັບຜົນກະທົບ ກ່ຽວກັບຈຸດປະສົງຂອງໂຄງການ ແລະ ລະດົມການຮ່ວມມືກັບໂຄງການ.

- ຕິດຕາມການຊົດເຊີຍຂອງດິນທີ່ຖືກກະທົບ, ສິ່ງປຸກສ້າງ ແລະ ພືນລະປູກ.

- ປະສານສົມທົບກັບເຈົ້າໜ້າທີ່ໂຄງການ ໃນການຕິດຕາມການຈ່າຍຄ່າຊົດເຊີຍທີ່ດິນ, ສິ່ງປຸກສ້າງ ແລະ ພືດພັນ ທີ່ໄດ້ຮັບຜົນກະທົບ ທີ່ຮັບຮອງຈາກລັດຖະບານ.
- ແກ້ໄຂການຮ້ອງທຸກ, ບັນຫາ ແລະ ການແກ້ໄຂການຊົດເຊີຍຕາມກອບກົດໝາຍ ແລະ ຄວາມປອດໄພ.
- ລາຍງານເປັນແຕ່ລະໄລຍະກ່ຽວກັບ ການຈັດຕັ້ງປະຕິບັດການຊົດເຊີຍໃຫ້ແກ່ເຈົ້າໜ້າທີ່ຂັ້ນສູງ ແລະ ເພື່ອຂໍທິດຊີ້ນຳ.

**ການຕິດຕາມກວດກາ ແລະ ການລາຍງານ**

ກະຊວງ ຍທຂ ມີຄວາມຮັບຜິດຊອບຢ່າງເຕັມທີ່ໃນການຄວບຄຸມການຈັດຕັ້ງປະຕິບັດແຜນ EGEP ຢ່າງມີປະສິດຕິຜົນ. ສອງວິທີການໃນການຕິດຕາມກວດກາ ແລະ ການລາຍງານສາມາດນຳໃຊ້ໄດ້ຄື: (i) ການຕິດຕາມ ແລະ ການລາຍງານຢ່າງຕໍ່ເນື່ອງ; ແລະ (ii) ການຕິດຕາມຜົນກະທົບ.

**ງົບປະມານ ແລະ ການເງິນ**

ງົບປະມານ ສຳລັບການຈັດຕັ້ງປະຕິບັດແຜນ EGEP ໄດ້ຖືກຈັດສັນເປັນສ່ວນໜຶ່ງ ຂອງການຈັດຕັ້ງປະຕິບັດ ESMF ທີ່ຮັບຜິດຊອບໂດຍ EDPD / PTRI ເຊິ່ງປະມານ 3,867 ໂດລາ ສຳລັບຊຸດເສັ້ນທາງຊ່ວງທີ່ 3 ນີ້.

# Executive Summary

The Government of Lao PDR (GOL) has prepared this Ethnic Groups Engagement Plan (EGEP) for the Package 3 of the Climate Resilience Improvement of National Road 13 South (NR-13S) Project, in order to address the project's impacts on the ethnic minorities that exist in the project area.

The GOL through the Ministry of Public Works and Transport (MPWT) and with assistance from the Asian Infrastructure Investment Bank (AIIB), World Bank (WB) and European Investment Bank (EIB) is planning to implement the NR-13S Improvement Project from kilometer (km) 71 to km 346. The Project Road will be divided into four improvement and maintenance contracts (or packages) with specific financing by WB, EIB, and AIIB while the Government of Lao's Road Management Fund (RMF) will provide the counterpart funds. The AIIB is considering the financing of Package 3 from km 190 to km 268 (called in this document as the Project Road or the proposed Project).

As part of the WB funded Lao Road Sector Project 2 (LRSP2), to avoid and mitigate the potential negative impacts of the works during construction and maintenance services, an Environment and Social Management Framework (ESMF), an Ethnic Group Engagement Framework (EGEF), and a Resettlement Policy Framework (RPF) were prepared and approved by the WB and they were publicly disclosed. For Package 3 to be financed by the AIIB, an Environment and Social Management Plan (ESMP), a Resettlement Plan (RP) and an Ethnic Group Engagement Plan (EGEP) have been prepared in accordance with AIIB's Environmental and Social Policy (ESP).

The improvement project works will include overlaying with asphalt concrete of existing two-lane road and climate resilience improvement of vulnerable road sections e.g. construction of additional and larger culverts with appropriate inlets and outlets, side ditches and canals to drain run-off water, and slope protection. The design and improvement will ensure that storm water can discharge to natural receiving watercourses, minimizing the impact to the road and adjacent surroundings.

This EGEP covers Package 3 of the NR-13S, from km 190 to km 268, supported by AIIB.

## Objective of EGEP

Objectives of the present EGEP are to design and implement the proposed Projects in a way that fosters full respect for ethnic groups' identity, dignity, human rights, economies and cultures, as defined by the ethnic groups themselves, so that they: (a) receive culturally appropriate social and economic benefits; (b) do not suffer adverse impacts as a result of the proposed Project; and (c) can participate actively in the proposed Project.

In line with the above objectives, the social assessment was carried out and free, prior and informed consultations with the affected ethnic group members of the project area were also conducted. The findings from the social assessment and free, prior and informed consultation process were used to prepare the present EGEP for the affected ethnic groups in the project area.

## Ethnic Groups in the Project Area

In general, the Lao-Tai ethno-linguistic group is the dominant group in the Project Area, comprising 90% of the population. A number of other ethnic groups that exist in the project area include Lao Loum, Khmu, Hmong, Lue, Phouthai, Tai, with the Lao Loum being the largest ethnic group in the Project Area. It has been assessed that ten villages in two districts of two provinces (nine villages in Pakkading District, Bolikhamxay Province and one village in Hinboun District, Khammouane province) would be affected by various forms of losses caused by the project, of which only two villages have affected ethnic groups. These ethnic groups will be directly affected by the project.

## Potential Project Impact on Ethnic Groups

This project work for the road section km190 to km268 will likely have impact on minority ethnic groups (EGs) such as Khmu and Hmong. The project is anticipated to have overall positive impact on people from ethnic groups. However, some potential negative impact on ethnic groups may arrive. The impacts anticipated from the works will mainly be within the existing right of way. However, the project works will require land acquisition of private and government land.

Based on the current design alignment and resettlement planning, a total number of Project Affected Households (PAHs) are estimated at 177 households which comprise 154 households of Lao Loum, one household of Khmu and 22 households of Hmong groups. The impacts of Khmu and Hmong families are mainly on their livelihood activities.

Other impacts of the project on the EGs include:: (i) increased human and livestock road accidents; (ii) damages to crops; (iii) health hazards such as: (a) dust and noise pollution; (b) potential to increase human and livestock diseases (c) possible to get danger from construction material storage and construction sites; (d) poor sanitation and hygiene from poor waste disposal/ management which will be health related; (iv) social problems.

## Measures to Minimize Impacts on Ethnic Groups

Efforts have been made to minimize the resettlement impacts by analysis of design options to reduce the width of the COIs. The following tasks were carried out as part of the EGEP preparation: (i) a social assessment; (ii) a process of inclusive consultation with representatives of the ethnic minority groups; (iii) a process of free, prior and informed consultation; (iv) an Action Plan of the EGEP, which was prepared based on the first three processes.

## Proposed Action Plan for EGEP

The following actions are included in the EGEP:

- Establishing project grievance redress mechanism (GRM) with participation from EGs.
- nominating EGEP-focal persons both in PTRI and construction supervision consultants.
- Continued consultations with ethnic groups during the construction and operation and maintenance (O&M) phase of the project including free, prior, and informed consultations (FPIC) on a regular basis;
- Participation of ethnic groups in monitoring the implementation of EGEP and also ESMP and RP.

## Legal and Policy Framework

This EGEP for NR13S improvement project complies with the AIIB's Environmental and Social Standard 3 (ESS3) on Indigenous Peoples, some provisions of Decree 84 of the Lao Government, and the Decree on Environmental Impact Assessment (2019) in consultation with the relevant national legislations including Ethnic Group Policy (1992), Country's constitution (1995), Local Administration Law (2015), Land Law (2019) and a National Guideline on Consultation with Ethnic Groups. The guidelines provide principles and processes to carry out meaningful consultations with, and obtain free, prior and informed consent of all ethnic groups affected by developments projects in a culturally sensitive manner. The guideline consists of: a) objectives and scope, b) consultation process with ethnic groups at respective stages of development projects, c) consultation approaches and methods for different ethnic groups in a culturally sensitive manner, d) expected outcomes of consultation at each stage, and e) implementation arrangement and responsibility.

## Implementation Arrangements

The Ministry of Public Works and Transport (MPWT) is the implementing agency for the project with the overall management and coordination of the Department of Planning and Cooperation (DPC). The Public Works transport and Research Institute (PTRI) will coordinate with the provincial Department of Public Work and Transports (DPWTs) in Bolikhamxay and Khammouane provinces to monitor the implementation of the present EGEP, in addition to RP and ESMP of the proposed project.

## Grievance Redress Mechanism

A grievance redress mechanism has been established for the project, under which grievance redress committees will be formed. The role and responsibilities identified for the grievance committees include:

- Coordination with MPWT, village authorities and other concerned parties to create awareness of the APs on the project purpose and to mobilize for cooperation with the project.
- Monitor compensation of the affected lands, structures and crops.
- Coordinate with the project officers in monitoring of compensation payment of the affected land, structures and crops approved by the government.
- Resolve grievances, problems and settle compensations according to legal frameworks and security.
- Report periodically on the compensation implementation to the higher authorities and to seek guidance.

## Monitoring and Reporting

The MPWT takes full responsibility to oversee the effective implementation of the EGEP. Two monitoring and reporting approaches will be applied: (i) ongoing monitoring and reporting; and (ii) impact monitoring.

## Budget and Financing

The budget for EGEP implementation has been allocated as part of EGEF implementation responsible by EDPD/PTRI which is about USD3,867 for the Package 3.